ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
Lao Culture Tourism Public Group Company

ເລກທີ 156 - - /ບທວລ
ນະຄອນຫຼວງວຽງຈັນ, ວັນທີ 14 OCT 2026

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,
ທ່ານ ຜູ້ອຳນວຍການໃຫຍ່ ຂອງຕະຫຼາດຫຼັກຊັບລາວ,
ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ກຸ່ມທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

ເລື່ອງ: ລາຍງານກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນປັບປຸງ ແລະ ຟື້ນຟູທຸລະກິດ ຂອງບໍລິສັດ ປະຈຳໄຕມາດ 3 ປີ 2026.

- ຂໍ້ຕົກລົງວ່າດ້ວຍການຮັບຮອງປົດແຜນການປັບປຸງ ແລະ ຟື້ນຟູກິດຈະການຂອງບໍລິສັດຊີມັງ ລາວ ມະຫາຊົນ ສະບັບເລກທີ 1958/ກປທ, ລົງວັນທີ 21/4/2022.
- ອີງຕາມແຜນການປັບປຸງ ແລະ ຟື້ນຟູທຸລະກິດຂອງບໍລິສັດ ສະບັບລົງວັນທີ 30/12/2021

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ (ບທວລ) ຂໍຖືເປັນກຽດລາຍງານມາຍັງ ທ່ານເພື່ອຊາບກ່ຽວກັບ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນປັບປຸງ ແລະ ຟື້ນຟູທຸລະກິດຂອງ ບໍລິສັດ ນັບແຕ່ບໍລິສັດໄດ້ ເຂົ້າສູ່ຂະບວນການຟື້ນກິດຈະການ ເຊິ່ງມີລາຍລະອຽດ ດັ່ງນີ້:

I. ການເກັບໜີ້ຕ້ອງຮັບ: ຮອດປັດຈຸບັນນີ້ ໜີ້ຕ້ອງຮັບສ່ວນຫຼາຍໄດ້ເກັບຄືນສຳເລັດແລ້ວ ແຕ່ຍັງເຫຼືອ ຈຳນວນ 392.289.331 ກີບບໍ່ໄດ້ເກັບຄືນ ເຊິ່ງໄດ້ຕັ້ງຄ່າສຳຮອງໜີ້ສູນໝົດ, ໜີ້ຕ້ອງຮັບທີ່ເກັບຄືນແມ່ນໃຊ້ແທນເງິນກູ້ຢືມທະນາຄານໝົດ ແລະ ຈ່າຍເງິນອຸດໜູນພະນັກງານອອກການຈຳນວນໜຶ່ງ.

II. ຮອດ ປີ 2020 ໄດ້ສະສາງໜີ້ສິນຕ້ອງສົ່ງທັງໝົດຈຳນວນ 37,82 ຕື້ກີບ ລວມມີເງິນກູ້ຢືມ, ໜີ້ຕ້ອງສົ່ງ ເງິນຮັບລ່ວງໜ້າຈາກລູກຄ້າ, ໜີ້ຕ້ອງສົ່ງໃຫ້ພາກສ່ວນກ່ຽວຂ້ອງ, ໜີ້ສິນຈາກພັນທະບັດ, ໜີ້ຕ້ອງສົ່ງໃຫ້ ພະນັກງານ ແລະ ໜີ້ສິນອື່ນໆ.

ຫຼັງຈາກຂາຮຸ້ນຈີນຜູ້ໃໝ່ເຂົ້າມາປະຈຳການຢູ່ບໍລິສັດແລ້ວ, ໄດ້ສະສາງຕໍ່ໜີ້ສິນດັ່ງກ່າວ ແຕ່ຍັງເຫຼືອອາ ກອນຕ້ອງມອບໃຫ້ລັດບໍ່ທັນໄດ້ຈ່າຍ ຕ້ອງຖ້າຂາຮຸ້ນຈີນຜູ້ໃໝ່ໄດ້ຮັບໃບອະນຸຍາດລົງທຶນຕ່າງປະເທດຈາກ ລັດຖະບານຈີນແລ້ວ ຈຶ່ງສາມາດຊຳລະອາກອນຄ້າງຈ່າຍໃຫ້ສຳເລັດ.

III. ການແກ້ໄຂຂໍ້ຂັດແຍ່ງດ້ານແຮງງານ: ໄດ້ຊຳລະ 80% ຂອງເງິນອຸດໜູນພະນັກງານອອກການໃນຈຳ ນວນ9,88 ຕື້ກີບ. ຮອດປັດຈຸບັນນີ້ ຍັງເຫຼືອເງິນອຸດໜູນພະນັກງານອອກການຈຳນວນ 3.918.319.964 ກີບຍັງບໍ່ໄດ້ຊຳລະ,ຕ້ອງຖ້າຂາຮຸ້ນຈີນຜູ້ໃໝ່ໄດ້ຮັບໃບອະນຸຍາດລົງທຶນຕ່າງປະເທດຈາກລັດຖະບານຈີນ ແລ້ວ ຈຶ່ງສາມາດຊຳລະເງິນອຸດໜູນພະນັກງານອອກການຄ້າງຈ່າຍໃຫ້ໝົດ.

IV. ການຊື້ຮຸ້ນຂອງບໍລິສັດ LCS ແລະ ລາຍຍ່ອຍ: ຫຼັງຈາກຂາຮຸ້ນຈີນຜູ້ໃໝ່ໄດ້ຮັບໃບອະນຸຍາດລົງທຶນ ຕ່າງປະເທດຈາກລັດຖະບານຈີນແລ້ວ ຈະຊື້ຮຸ້ນຂອງບໍລິສັດ LCS ແລະ ລາຍຍ່ອຍ.

V. ແຜນທຸລະກິດ

1. **<u>ໂຄງການດ້ານວັດທະນະທຳ-ທ່ອງທ່ຽວ</u>**

ບ້ານໂພນພະເນົາ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສປປ ລາວ
Phonphanao Village, Saysettha District, Vientiane Capital, Lao PDR
Tel: (856-21) 451116, 451222, Facebook: Lao Culture Tourism Public Group Company

1.1 ສະພາບປັດຈຸບັນ

ເຊິ່ງເປັນໂຄງການຈຸດສຸມຂອງກຸ່ມບໍລິສັດ ລວມໂຄງການກໍ່ສ້າງອາຄານວັດທະນະທຳ-ທ່ອງທ່ຽວ, ໂຄງ ການພັດທະນາເຂດເສດຖະກິດ-ອຸດສາຫະກຳ ທ່ອງທ່ຽວ ວັດທະນະທຳ ເມືອງວັງວຽງ, ໂຄງການ ກໍ່ສ້າງເຂດຣີສອດສາກົນໜອງດວງຈັນສີຟ້າ ເມືອງວັງວຽງ ແລະ ຫໍພັກພະນັກງານຂອງກຸ່ມບໍລິສັດ ເຊິ່ງສີ່ ໂຄງການດັ່ງກ່າວນອນຢູ່ໃນຂັ້ນຕອນການກໍ່ສ້າງ, ພຽງແຕ່ໂຄງການອາຄານວັດທະນະທຳ-ທ່ອງທ່ຽວໄດ້ສ້າງ ລາຍຮັບຈຳນວນ ໜຶ່ງຈາກການດຳເນີນງານ.

(1) ໂຄງການກໍ່ສ້າງອາຄານວັດທະນະທຳ-ທ່ອງທ່ຽວ: ໄດ້ວາງສີລາລຶກໃນເດືອນ ເມສາ 2023, ສຳ ເລັດໂຄງສ້າງຕົກໂຕສຳຄັນໃນເດືອນ ຕຸລາ 2025 , ຮອດປັດຈຸບັນນີ້ ການຕົບແຕ່ງຝາພາຍນອກໄດ້ສຳເລັດ 90%, ຊັ້ນທີ 2, 4, 13, 20 ໄດ້ກໍ່ສ້າງສຳເລັດ ແລະນຳໃຊ້ໄດ້, ຊັ້ນທີ 1, 3, 11-20 ໄດ້ກໍ່ສ້າງສຳເລັດ 75%.

(2) ໂຄງການພັດທະນາເຂດເສດຖະກິດ-ອຸດສາຫະກຳ ທ່ອງທ່ຽວ ວັດທະນະທຳ ເມືອງວັງວຽງ: ໄດ້ ວາງສີລາລຶກໃນເດືອນ ມັງກອນ 2024, ຮອດປັດຈຸບັນນີ້ ໄດ້ສຳເລັດສ້າງແຜນການລວມ, ບົດວິພາກ ເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຮັບຮອງຜ່ານກະຊວງ ວທ ແລະ ແຂວງວຽງຈັນ, ຍັງໄດ້ຮັບໃບຢັ້ງຢືນການສຳຫຼວດ-ວັດແທກທີ່ດິນໃນເນື້ອທີ່ 1.981.314 ㎡, ຈະສືບຕໍ່ຂໍ ໃບຢັ້ງຢືນການສຳຫຼວດ-ວັດແທກໃຫ້ແກ່ດິນຕອນເຫຼືອ.

(3) ເຂດຣີສອດສາກົນໜອງດວງຈັນສີຟ້າ ເມືອງວັງວຽງ (ສູນຝຶກອົບຮົມວັງວຽງ ກະຊວງປ້ອງກັນ ປະເທດ): ໄດ້ວາງສີລາລຶກໃນເດືອນ ມັງກອນ 2024, ຮອດເດືອນ ເມສາ 2026 ໄດ້ກໍ່ສ້າງສຳເລັດ ເສັ້ນທາງພາຍໃນຂອບເຂດ, ປ້ອມຍາມ, ປະຕູໂຂງ, ປ້າຍໂຄສະນາ ແລະອື່ນໆທີ່ເປັນພື້ນຖານຂອງໂຄງການ , ຫຼັງຈາກຮັບໃບຢັ້ງຢືນທີ່ດິນແລ້ວ ຈະເລີ່ມການດຶງດູດການລົງທຶນ ແລະ ການກໍ່ສ້າງ.

(4) ຫໍພັກພະນັກງານ: ໂຄງສ້າງໂຕສຳຄັນໄດ້ສຳເລັດ 90%, ເລີ່ມຕົບແຕ່ງພາຍໃນຈຳນວນໜຶ່ງ ໃກ້ ຈະນຳໃຊ້ໄດ້ແລ້ວ.

1.2 **<u>ຄາດຄະເນເວລາທີ່ຈະເລີ່ມມີລາຍຮັບ</u>**

(1) ຫໍພັກພະນັກງານ: ທ້າຍປີ 2026 ຈະເປີດນຳໃຊ້ໄດ້ ສະໜອງໃຫ້ພະນັກງານພາຍໃນກຸ່ມບໍລິສັດ ເປັນບຸລິມະສິດ, ຍັງສາມາດເກັບຄ່າເຊົ່າຈຳນວນໜຶ່ງແຕ່ປີ 2027 ເປັນຕົ້ນໄປ.

(2) ອາຄານວັດທະນະທຳ-ທ່ອງທ່ຽວ: ຊັ້ນທີ 2, 4, 13, 20 ກໍ່ສ້າງສຳເລັດ ແລະນຳໃຊ້ໄດ້ ສາມາດ ສ້າງລາຍຮັບຈຳນວນໜຶ່ງຈາກການຊື້ຂາຍຄອນໂດ, ຄາດວ່າຫົກເດືອນຕົ້ນປີ 2027 ສຳເລັດໂຄງການ ເປັນຮຽບຮ້ອຍ ແລະ ເລີ່ມການຊື້ຂາຍຄອນໂດ, ຮ້ານຄ້າ ແລະ ໂຮງແຮມຈະຄ່ອຍໆເຂົ້າມາລົງທຶນ ແລະ ເປີດບໍລິການ, ປີ 2028 ຈະມີລາຍຮັບຈາກການດຳເນີນງານທີ່ໝັ້ນຄົງ.

(3) ໂຄງການພັດທະນາເຂດເສດຖະກິດ-ອຸດສາຫະກຳ ທ່ອງທ່ຽວ ວັດທະນະທຳ ເມືອງວັງວຽງ ແລະ ເຂດຣີສອດສາກົນໜອງດວງຈັນສີຟ້າ ເມືອງວັງວຽງ: ປີ 2027 ຈະສຳເລັດແຜນການອອກແບບ, ການດຶງດູດການລົງທຶນ, ໂຄງການກໍ່ສ້າງຍ່ອຍພາຍໃນຂອບເຂດຕາມຂັ້ນຕອນ, ປີ 2028-2029 ຈະສ້າງ ລາຍຮັບຈຳນວນໜຶ່ງຈາກການດຳເນີນໂຄງການດ້ານວັດທະນະທຳ-ທ່ອງທ່ຽວ, ໂຮງແຮມ ແລະ ເກັບຄ່າເຊົ່າ ສະຖານທີ່.

1.3 **<u>ແຜນວຽກງານໃນຕໍ່ໜ້າ</u>**

(1) ເລັ່ງລັດຕົບແຕ່ງຊັ້ນໂຮງແຮມ ແລະ ຊັ້ນການຄ້າຂອງອາຄານວັດທະນະທຳ-ທ່ອງທ່ຽວ ເລີ່ມການດຶງດູດການລົງທຶນໄປພ້ອມກັນ.

(2) ເລັ່ງລັດດຳເນີນການຂໍໃບຢັ້ງຢືນການສຳຫຼວດ-ວັດແທກໃຫ້ແກ່ດິນຕອນທີ່ຍັງເຫຼືອ ແລະ ຍື່ນໃບຄຳຮ້ອງຂໍເຊັນສັນຍາສຳປະທານໂຄງການວັດທະນະທຳທ່ອງທ່ຽວກັບລັດຖະບານພ້ອມກັນ, ນຳເອົາໂຄງການດັ່ງກ່າວເຂົ້າໃນບັນຊີລາຍຊື່ໂຄງການແລວທາງຮ່ວມມື ລາວ-ຈີນ.

(3) ຊຸກຍູ້ການດຶງດູດການລົງທຶນຂອງໂຄງການເຂດອີສອດສາກົນໜອງດວງຈັນສີຟ້າ ເມືອງວັງວຽງ, ເລັ່ງລັດການຮັບສະໝັກການປະມູນບໍລິສັດອອກແບບ ແລະ ການກໍ່ສ້າງໃຫ້ແກ່ໂຮງແຮມອີສອດໜອງດວງຈັນສີຟ້າ, ບູລະນະໂຄງລ່າງພື້ນຖານປະກອບເປັນຊຸດຂອງໂຄງການ.

(4) ທ້າຍປີ 2026 ສຳເລັດການກໍ່ສ້າງ ກວດຮັບໂຄງການກໍ່ສ້າງຫໍພັກພະນັກງານ ແລະ ສາມາດເປີດນຳໃຊ້ໄດ້.

(5) ຮ່ວມມືກັບກຸ່ມບໍລິສັດທ່ອງທ່ຽວວັດທະນະທຳ ສິບສອງພັນນາ ຢູນນານ ດຳເນີນທຸກລະກິດນຳທ່ຽວລະຫວ່າງປະເທດ, ສ້າງຊ່ອງທາງສອງເສັ້ນທາງດ້ານການທ່ອງທ່ຽວ, ການກວດສຸຂະພາບ, ການບຳລຸງຮັກສາສຸຂະພາບລະຫວ່າງລາວ-ຈີນ, ສ້າງລາຍຮັບໃຫ້ມີຄວາມຫຼາກຫຼາຍ.

1.4 **<u>ມາດຕະການຮັບມືກັບບັນຫາ</u>**

(1) ບັນຫາຄວາມຊັກຊ້າໃນການດຳເນີນເອກະສານທີ່ດິນ: ມອບໃຫ້ຜູ້ຮັບຜິດຊອບສະເພາະໃນການປະສານງານກັບພາກສ່ວນກ່ຽວຂ້ອງ ເພື່ອເລັ່ງຊຸກຍູ້ການອອກໃບຕາດິນຂອງອາຄານວັດທະນະທຳ-ທ່ອງທ່ຽວ ແລະ ເຂດພັດທະນາວັງວຽງ, ພ້ອມທັງຕິດຕາມຄວາມຄືບໜ້າຂອງການພິຈາລະນາອະນຸມັດ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນໃນຂັ້ນຕອນການດຳເນີນເອກະສານຢ່າງທັນການ.

(2) ບັນຫາຄວາມຊັກຊ້າຂອງກຳນົດເວລາການກໍ່ສ້າງ: ກຳນົດລາຍລະອຽດຂອງແຕ່ລະຂັ້ນຕອນການກໍ່ສ້າງ, ວາງແຜນກຳນົດເວລາແບບນັບຖອຍຫຼັງ ແລະ ປະຕິບັດການປະເມີນຜົນຄວາມຄືບໜ້າຂອງຫົວໜ່ວຍຮັບເໝົາກໍ່ສ້າງຢ່າງເຂັ້ມງວດ. ຄຸ້ມຄອງ ແລະ ຈັດສັນການຈັດຊື້ວັດສະດຸ, ອຸປະກອນ ພ້ອມທັງຕາຕະລາງການຂົນສົ່ງສິນຄ້າຂ້າມຊາຍແດນໄວ້ລ່ວງໜ້າ, ກຳນົດໄລຍະເວລາສຳຮອງ ເພື່ອຫຼີກເວັ້ນຄວາມສ່ຽງຈາກຄວາມຊັກຊ້າໃນການກໍ່ສ້າງຢ່າງມີປະສິດທິຜົນ.

(3) ບັນຫາການດຶງດູດການລົງທຶນ ແລະ ການດຳເນີນງານໃນໄລຍະຕໍ່ໄປ: ຮອບຮອມ ແລະ ວິເຄາະຮູບແບບທຸລະກິດຂອງຕະຫຼາດວັດທະນະທຳ-ທ່ອງທ່ຽວຢູ່ນະຄອນຫຼວງວຽງຈັນ ແລະ ເມືອງວັງວຽງໄວ້ລ່ວງໜ້າ. ກຽມຄວາມພ້ອມດ້ານຊັບພະຍາກອນໂຮງແຮມ, ຄອນໂດ ແລະ ຮ້ານຄ້າ, ພ້ອມທັງປະສານສົມທົບກັບວິສາຫະກິດພາກລັດ ແລະ ເອກະຊົນ ເພື່ອຮັບປະກັນໃຫ້ການດຶງດູດການລົງທຶນສາມາດປະຕິບັດໄດ້ສຳເລັດຜົນ.

2. **<u>ໂຄງການພະພຸດທະຮູບພູຜາບ໊ວ</u>**

2.1 ສະພາບປັດຈຸບັນ

ໂຄງການນີ້ຕັ້ງຢູ່ຈອມພູຜາບ໊ວ ບ້ານນາຄູນ, ເມືອງວັງວຽງ, ແຂວງວຽງຈັນ ກວມເນື້ອທີ່ 1.087.759 ㎡, ນອນຢູ່ໃນຂັ້ນຕອນການກໍ່ສ້າງສ້ອມແປງເສັ້ນທາງ, ຍັງບໍ່ໄດ້ເປີດບໍລິການ ແລະ ບໍ່ມີລາຍຮັບ.

(1) ສຳເລັດແຜນການອອກແບບລວມ.

(2) ປີ 2025 ສຳເລັດການສຳຫຼວດສະຖານທີ່, ສະເໜີສ້າງຕັ້ງມູນນິທິພະພຸດທະຮູບພູຜາບົວ.

(3) ເດືອນ ມັງກອນ 2026, ບໍລິສັດຮັບເໝົາກໍ່ສ້າງເຂົ້າປະຈຳການພາກສະໜາມ ເພື່ອສ້າງເສັ້ນທາງໄປເຖິງຈອມພູຜາບົວ.

(4) ເດືອນເມສາ 2026 ມູນນິທິພະພຸດທະຮູບພູຜາບົວ ຄະນະຈັດຕັ້ງສູນກາງພັກອອກຂໍ້ຕົກລົງອະນຸມັດສ້າງຕັ້ງມູນນິທິພະພຸດທະຮູບພູຜາບົວ.

(5) ວັນທີ 28 ສິງຫາ 2026 ຈັດພິທີປະກາດການສ້າງຕັ້ງ ມູນນິທິພະພຸດທະຮູບພູຜາບົວ ທີ່ຫໍປະຊຸມແຫ່ງຊາດ.

2.2 **<u>ຄາດຄະເນເວລາທີ່ຈະເລີ່ມມີລາຍຮັບ</u>**

ປີ 2028 ເປີດບໍລິການໄລຍະທີ 1 ຂອງໂຄງການ ທົດລອງດຳເນີນງານ ແລະ ສາມາດສ້າງລາຍຮັບຈາກການຂາຍປີ້, ບໍລິການດ້ານວັດທະນະທຳ ແລະກິດຈະກຳອື່ນໆ.

2.3 **<u>ແຜນວຽກງານໃນຕໍ່ໜ້າ</u>**

(1) ສະເໜີໃບອະນຸຍາດກໍ່ສ້າງຈາກພາກສ່ວນກ່ຽວຂ້ອງ.

(2) ສົມທົບກັບກິດຈະກຳຂອງມູນນິທິພະພຸດທະຮູບພູຜາບົວ ເພື່ອເຜີຍແຜ່ໂຄສະນາ, ສ້າງອິດທິພົນຄວາມໜ້າເຊື່ອຖືໄດ້ຂອງໂຄງການ.

(3) ອາໄສມູນນິທິພະພຸດທະຮູບພູຜາບົວ ຈັດຕັ້ງປະຕິບັດການລະດົມທຶນ ແລະ ການຄຸ້ມຄອງສະເພາະກິດສຳລັບທຶນກໍ່ສ້າງໂຄງການຢ່າງມີລະບຽບແບບແຜນ;

(4) ຊຸກຍູ້ການກະກຽມກໍ່ສ້າງໂຄງສ້າງຫຼັກຂອງພະພຸດທະຮູບຢູ່ເທິງຈອມພູ ແລະ ກຳນົດແຜນຄວາມຄືບໜ້າຂອງການກໍ່ສ້າງໃຫ້ມີຄວາມລະອຽດ;

2.4 ມາດຕະການຮັບມືກັບບັນຫາ

(1) ບັນຫາຄວາມຖືກຕ້ອງດ້ານນິຕິກຳໃນການຂໍອະນຸມັດວຽກງານທາງສາສະໜາ: ປະສານງານ ແລະ ຮ່ວມມືຢ່າງໃກ້ຊິດກັບ ຄະນະຈັດຕັ້ງສູນກາງພັກ, ອົງການພຸດທະສາສະໜາສຳພັນລາວ ແລະ ກະຊວງ ວທ, ຮັບປະກັນໃຫ້ທຸກຂັ້ນຕອນການກໍ່ສ້າງ ແລະ ການດຳເນີນງານ ແມ່ນປະຕິບັດຕາມກົດລະບຽບການຄຸ້ມຄອງສາສະໜາ, ວັດທະນະທຳ ແລະ ການທ່ອງທ່ຽວຂອງສປປ ລາວ ຢ່າງເຂັ້ມງວດ.

(2) ບັນຫາການຄຸ້ມຄອງເງິນທຶນ: ດຶງດູດ ແລະ ຮ່ວມມືກັບນັກລົງທຶນທີ່ຖືກຕ້ອງຕາມກົດໝາຍ ເພື່ອຮ່ວມກັນພັດທະນາ ແລະ ດຳເນີນງານໂຄງການພະພຸດທະຮູບ, ສ້າງຕັ້ງບັນຊີສະເພາະໂຄງການ ເພື່ອຄຸ້ມຄອງການນຳໃຊ້ເງິນທຶນໃຫ້ຖືກຕາມເປົ້າໝາຍ,ຈັດລະບຽບການເຮັດບັນຊີລາຍຮັບ-ລາຍຈ່າຍໃຫ້ມີຄວາມໂປ່ງໃສ, ຮັບປະກັນຄວາມໝັ້ນທ່ຽງຂອງທຶນກໍ່ສ້າງໂຄງການ.

(3) ບັນຫາການກໍ່ສ້າງໃນເຂດພູດອຍ: ເນື່ອງຈາກພື້ນທີ່ບໍລິເວນຈອມພູມີສະພາບພູມສັນຖານທີ່ສະຫຼັບຊັບຊ້ອນ ຕ້ອງປະຕິບັດມາດຕະຖານການກໍ່ສ້າງຢ່າງເຂັ້ມງວດ ເປັນຕົ້ນແມ່ນ: ການປ້ອງກັນຄວາມປອດໄພຂອງຄ້ອຍຂ້າງ, ກັນມຶ່ນ ແລະ ກັນຟ້າຜ່າ, ຈັດຕັ້ງການກວດກາຄວາມປອດໄພການກໍ່ສ້າງເປັນປະຈຳ.

3.ໂຄງການຜະລິດ ແລະ ປຸງແຕ່ງຜະລິດຕະພັນທ່ອງທ່ຽວ

3.1 ສະພາບປັດຈຸບັນ

ໂຄງການແມ່ນຢູ່ໃນ ຂັ້ນຕອນການວາງແຜນຮູບແບບທຸລະກິດ ແລະ ສະສົມແຫຼ່ງທຶນຊັບພະຍາກອນ, ປັດຈຸບັນຍັງບໍ່ທັນໄດ້ເລີ່ມດຳເນີນການ ແລະ ບໍ່ທັນມີລາຍຮັບ. ໂດຍອີງໃສ່ແຜນຍຸດທະສາດຂອງກຸ່ມ ບໍລິສັດໃນສອງເຂດທ່ອງທ່ຽວຫຼັກ ຄື: ວຽງຈັນ ແລະ ວັງວຽງ, ສົມທົບກັບວຽກງານຮ່ວມມືດ້ານການ ທ່ອງທ່ຽວ ແລະ ວັດທະນະທຳສອງເສັ້ນລະຫວ່າງລາວ-ຈີນ ໄດ້ກຳນົດຮູບແບບທຸລະກິດຂອງໂຄງການ ເປັນທີ່ຮຽບຮ້ອຍແລ້ວ ໂດຍເນັ້ນໃສ່ການພັດທະນາຜະລິດຕະພັນວັດທະນະທຳ, ເຄື່ອງທີ່ລະນຶກການ ທ່ອງທ່ຽວທ້ອງ ຖິ່ນ, ການຜະລິດ, ປຸງແຕ່ງ ແລະ ວາງສະແດງຂາຍຜະລິດຕະພັນທ່ອງທ່ຽວທີ່ມີເອກະລັກ (ເຊັ່ນ: ກາເຟລາວ), ຕອງສະໜອງຄວາມຕ້ອງການດ້ານການດຳເນີນງານຂອງແຫຼ່ງທ່ອງທ່ຽວ ແລະ ໂຮງແຮມຕ່າງໆໃນເຄືອຂອງກຸ່ມບໍລິສັດ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດໄດ້ຢ່າງໄວວາ ແລະ ສ້າງລາຍຮັບ ຕົວຈິງ.

3.2 ຄາດຄະເນເວລາທີ່ຈະເລີ່ມມີລາຍຮັບ

ປີ 2027 ຈະເລີ່ມການຜະລິດຂອງໂຄງການໂຮງງານກາເຟ, ໂດຍຈະສ້າງລາຍຮັບໂດຍຜ່ານການ ຜະລິດຜະລິດຕະພັນທ່ອງທ່ຽວ, ການຂາຍສົ່ງ, ການຂາຍຍ່ອຍໃນແຫຼ່ງທ່ອງທ່ຽວ ແລະການສະໜອງຈຳ ໜ່າຍແບບຂ້າມແດນ.

3.3 ແຜນວຽກງານໃນຕໍ່ໜ້າ

(1) ສົມທົບກັບການວາງແຜນລວມຂອງໂຄງການວັດທະນະທຳທ່ອງທ່ຽວທີ່ມີຢູ່ ຂະຫຍາຍແຜນ ການດຳເນີນງານແບບຄົບວົງຈອນ ນັບຕັ້ງແຕ່ການພັດທະນາ, ການອອກແບບ, ການຜະລິດ ຈົນເຖິງການ ປຸງແຕ່ງຜະລິດຕະພັນທ່ອງທ່ຽວ;

(2) ປະສານງານກັບກະຊວງ ວທ ສະເໜີນະໂຍບາຍສະໜັບສະໜູນພາສີ-ອາກອນ ແລະ ນະໂຍບາຍ ອື່ນກ່ຽວກັບຂະແໜງການທ່ອງທ່ຽວ;

(3) ສຳຫຼວດຄວາມຕ້ອງການຂອງຕະຫຼາດການທ່ອງທ່ຽວລາວ-ຈີນ ເພື່ອພັດທະນາຜະລິດຕະພັນ ວັດທະນະທຳ, ຂອງພື້ນເມືອງ ແລະ ຜະລິດຕະພັນເອກະລັກທີ່ເໝາະສົມກັບນັກທ່ອງທ່ຽວຂ້າມແດນ;

(4) ເຊື່ອມໂຍງກັບຊ່ອງທາງການຮ່ວມມືດ້ານການທ່ອງທ່ຽວຂອງກຸ່ມບໍລິສັດວັດທະນະທຳທ່ອງ ທ່ຽວສິບສອງພັນນາ ສ້າງຊ່ອງທາງການສົ່ງອອກ ແລະ ການຂາຍຂ້າມແດນ ສຳລັບຜະລິດຕະພັນທ່ອງ ທ່ຽວທ້ອງຖິ່ນຂອງລາວ.

3.4 ມາດຕະການຮັບມືກັບບັນຫາ

(1) ບັນຫາຜະລິດຕະພັນທ່ອງທ່ຽວມີຄວາມຄ້າຍຄືກັນ: ສ້າງຄວາມແຕກຕ່າງໃຫ້ແກ່ຜະລິດຕະພັນ ສະເພາະຕົວໂດຍການເຊື່ອມໂຍງກັບວັດທະນະທຳພຸດທະສາສະໜາ, ທຳມະຊາດ ແລະ ອີດຄອງປະເພນີ ທ້ອງຖິ່ນຂອງລາວ, ສ້າງ IP ທີ່ໂດດເດັ່ນໂດຍອີງໃສ່ໂຄງການພະພຸດທະຮູບພູຜາບ໋ວ ແລະການທ່ອງທ່ຽວ ທຳມະຊາດຂອງເມືອງວັງວຽງ ;

(2) ບັນຫາຕ່ອງໂສ້ສະໜອງຍັງບໍ່ທັນຂະຫຍາຍຕົວເຕັມທີ່: ປະສານງານກັບຜູ້ສະໜອງວັດຖຸດິບ ທ້ອງຖິ່ນລ່ວງໜ້າ ເພື່ອສ້າງຊ່ອງທາງການຈັດຊື້ທີ່ໝັ້ນທ່ຽງ, ພ້ອມທັງກະກຽມ ແລະ ສະສົມແຫຼ່ງຜູ້ສະ ໜອງ ແລະ ຄູ່ຮ່ວມງານດ້ານໂລຈິສະຕິກແບບຂ້າມແດນໄວ້ຮອງຮັບ.

4. ໂຄງການກໍ່ສ້າງຕະຫຼາດຈຳໜ່າຍເຄື່ອງອາໄຫລ່ກົນຈັກກະສິກຳ

4.1 ສະພາບປັດຈຸບັນ

ໂຄງການນີ້ຕັ້ງຢູ່ບ້ານໂນນຂີ້ເຫຼັກ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ, ເປັນກຸ່ມສິ່ງປຸກສ້າງທີ່ໄດ້ກວມເອົາການຄ້າ, ທີ່ພັກ, ໂຮງແຮມ ແລະ ຫ້ອງການຢູ່ເຂດດຽວກັນ, ມີຈຳນວນໄດ້ສຳເລັດການກໍ່ສ້າງ ແຕ່ໂຄງການລວມຍັງຢູ່ໃນຂັ້ນຕອນການກໍ່ສ້າງແບບແບ່ງໄລຍະ ແລະ ກຽມການລະດົມການລົງທຶນ ບໍ່ໄດ້ເປີດໃຫ້ບໍລິການເປັນທາງການ ແລະ ບໍ່ໄດ້ສ້າງລາຍຮັບຈາກດຳເນີນທຸລະກິດ. ໂຄງການນີ້ໄດ້ວາງສີລາລຶກໃນເດືອນ ເມສາ 204, ຕໍ່ມາໃນເດືອນ ເມສາ 2026 ໄດ້ສຳເລັດກໍ່ສ້າງຕຶກເບີ 3 ກວມເນື້ອທີ່ດິນ 602.88 ㎡, ເນື້ອທີ່ການກໍ່ສ້າງ 2723.84 ㎡, ຊັ້ນທີ 1 ເປັນຮ້ານຄ້າ, ຊັ້ນທີ 2-4 ເປັນຫ້ອງພັກ ເຊິ່ງໄດ້ມາດຕະຖານການກໍ່ສ້າງ ແລະ ກວດຮັບ ມີເງື່ອນໄຂທີ່ສາສາມາດເປີດບໍລິການ. ພາກສ່ວນອື່ນຈະສືບຕໍ່ດຳເນີນການກໍ່ສ້າງຕາມຂັ້ນຕອນ.

4.2 ຄາດຄະເນເວລາທີ່ຈະເລີ່ມມີລາຍຮັບ

ທ້າຍປີ 2026 ຈະເລີ່ມການລະດົມທຶນຂອງໂຄງການ ແລະ ຈັດຕັ້ງປະຕິບັດໂຄງການໃຫ້ສຳເລັດໃນປີ 2027, ຫຼັງຈາກໂຄງການສຳເລັດການກໍ່ສ້າງເປັນຮຽບຮ້ອຍໃນປີ 2028 ຈະສ້າງລາຍຮັບຢ່າງຕໍ່ເນື່ອງຈາກການເຊົ່າຮ້ານຄ້າ, ການຂາຍຫ້ອງພັກ, ການດຳເນີນງານໂຮງແຮມ ແລະ ການຄຸ້ມຄອງຕະຫຼາດ.

4.3 ແຜນວຽກງານໃນຕໍ່ໜ້າ

(1) ສຳເລັດການດຳເນີນເອກະສານການຮ່ວມມືກ່ຽວກັບທີ່ດິນຕາມຂັ້ນຕອນພາຍໃນທ້າຍປີ 2026;

(2) ປັບປຸງການວາງແຜນຮູບແບບທຸລະກິດຂອງຕະຫຼາດອາ, ພ້ອມທັງດຶງດູດການລົງທຶນໂດຍການເຊື້ອເຊີນບັນດາຜູ້ປະກອບດ້ານການຄ້າຂາຍ, ເຄື່ອງອາໄຫຼ່ ແລະ ສ້ອມແປງກົນຈັກກະສິກຳທ້ອງຖິ່ນ ເພື່ອສ້າງເປັນເຂດການຄ້າກົນຈັກກະສິກຳສະເພາະດ້ານຢູ່ນະຄອນຫຼວງວຽງຈັນ;

(3) ເລັ່ງລັດການກໍ່ສ້າງບັນດາຮ້ານຄ້າ, ຄອນໂດ, ໂຮງແຮມ ແລະ ສິ່ງອຳນວຍຄວາມສະດວກອື່ນໆ ທີ່ປິ່ນອ້ອມໂຄງການ;

(4) ສ້າງທີມງານບໍລິຫານການຕະຫຼາດມືອາຊີບ ພ້ອມທັງກຳນົດສ້າງລະບຽບການກ່ຽວກັບການເຊົ່າ, ການຄຸ້ມຄອງອະສັງຫາລິມະຊັບ ແລະ ການບໍລິຫານການຕະຫຼາດ.

4. ມາດຕະການຮັບມືກັບບັນຫາ

(1) ບັນຫາຄວາມຄືບໜ້າຂອງການດຶງດູດການລົງທຶນຫຼ້າຊ້າ: ເຂົ້າຫາ ແລະ ເຈລະຈາໂດຍກົງກັບບັນດາຜູ້ປະກອບການດ້ານກະສິກຳ ແລະ ວິສາຫະກິດກົນຈັກກະສິກຳທ້ອງຖິ່ນ ພ້ອມທັງອອກນະໂຍບາຍສົ່ງເສີມການລົງທຶນເປັນແຕ່ລະໄລຍະ ເພື່ອຮີບຮ້ອນເຕົ້າໂຮມບັນດາຮູບແບບທຸລະກິດໃຫ້ໄວຂຶ້ນ;

(2) ບັນຫາການວາງແຜນໂຄງການກໍ່ສ້າງເປັນແຕ່ລະໄລຍະ: ນຳໃຊ້ຮູບແບບ " ສ້າງສຳເລັດເຂດໃດ, ເປີດດຳເນີນການເຂດນັ້ນ " ໂດຍມີເຄື່ອນໄຫວໃຫ້ແກ່ສ່ວນທີ່ກໍ່ສ້າງສຳເລັດແລ້ວກ່ອນ ເພື່ອສ້າງກະແສເງິນສົດກັບຄືນມາລ່ວງໜ້າ ແລະ ນຳມາໝູນວຽນຮັບໃຊ້ເຂົ້າໃນການກໍ່ສ້າງໂຄງການໄລຍະຕໍ່ໄປ.

5. ໂຄງການບໍ່ແຮ

5.1 ສະພາບປັດຈຸບັນ

ກຳລັງລໍຖ້າການເຊັນສັນຍາກັບລັດຖະບານ ບໍ່ມີການເຄື່ອນໄຫວ ແລະ ບໍ່ມີລາຍຮັບຈາກການດຳເນີນງານ.

(1) ວັນທີ 03/06/2024 ກຸ່ມບໍລິສັດໄດ້ເຊັນສັນຍາການຮ່ວມມືພັດທະນາດ້ານຂົງເຂດບໍ່ແຮ່ຢູ່ແຂວງ ຫົວພັນໃນເນື້ອທີ່ 131,92 ກິໂລຕາແມັດ ກັບບໍລິສັດ ລັດພັດທະນາຊົນນະບົດ ກະຊວງປ້ອງກັນປະເທດ.

(2) ວຽກງານກະກຽມເປື້ອງຂອງໂຄງການໄດ້ກຽມພ້ອມແລ້ວ ມີແຕ່ລໍຖ້າບໍລິສັດ ລັດພັດທະນາຊົນນະບົດເຊັນສັນຍາໂຄງການກັບລັດຖະບານຢ່າງເປັນທາງການ.

5.2 ຄາດຄະເນເວລາທີ່ຈະເລີ່ມມີລາຍຮັບ

ຫຼັງຈາກເຊັນສັນຍາ ແລະ ສາມາດເຄື່ອນໄຫວໂຄງການແລ້ວ ຄາດຈະສຳເລັດການກະກຽມ, ການສຳຫຼວດ, ການທົດລອງຂຸດຄົ້ນໃນປີ 2027 ເຊິ່ງຈະໄດ້ຮັບກະແສເງິນສົດຈາກການຮ່ວມມືຂຸດຄົ້ນຈຳນວນໜຶ່ງ, ປີ 2028 ສາມາດຂຸດຄົ້ນ, ປຸງແຕ່ງບໍ່ແຮ່ບາງສ່ວນ ແລະ ຈະສ້າງລາຍຮັບຈາກການຂາຍ.

5.3 ແຜນວຽກງານໃນຕໍ່ໜ້າ

(1) ມອບພະນັກງານສະເພາະຕິດຕາມຂັ້ນຕອນການພິຈາລະນາອະນຸມັດຂອງລັດຖະບານ, ປະສານງານກັບບໍລິສັດ ລັດພັດທະນາຊົນນະບົດໃນທຸກໆຂັ້ນຕອນ ເພື່ອເລັ່ງການປະຕິບັດໂຄງການໃຫ້ປະກົດຜົນເປັນຈິງ.

(2) ຕິດຕາມວຽກງານການຮ່ວມມືກໍ່ສ້າງອາຄານບໍ່ແຮ່ ຈະເລີ່ມກໍ່ສ້າງຫຼັງຈາກໄດ້ຮັບການອະນຸມັດ.

(3) ກະກຽມທຶນຮອນຂອງໂຄງການໄວ້ລ່ວງໜ້າ, ພ້ອມທັງກະກຽມບຸກຄະລາກອນດ້ານເຕັກນິກບໍ່ແຮ່ ແລະ ທີມງານບໍລິຫານ.

5.4 ມາດຕະການຮັບມືກັບບັນຫາ

(1) ບັນຫາໄລຍະເວລາການພິຈາລະນາບໍ່ແນ່ນອນ: ສ້າງກົນໄກການປະສານງານກັບພາກລັດ ເປັນປົກກະຕິ, ຕິດຕາມຄວາມຄືບໜ້າຂອງການພິຈາລະນາຢ່າງໃກ້ຊິດ ແລະ ກະກຽມເອກະສານຕ່າງໆເພື່ອຍື່ນຂໍອະນຸມັດໄວ້ລ່ວງໜ້າ.

(2) ບັນຫາການນິຕິກຳດ້ານບໍ່ແຮ່: ປະຕິບັດຕາມກົດໝາຍວ່າດ້ວຍແຮ່ທາດ, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ແລະ ກົດລະບຽບຄວາມປອດໄພໃນການຜະລິດຂອງ ສປປ ລາວ ຢ່າງເຂັ້ມງວດ; ທຸກໆຂັ້ນຕອນການພັດທະນາຕ້ອງໄດ້ຮັບການອະນຸມັດຖືກຕ້ອງຕາມກົດໝາຍໄວ້ລ່ວງໜ້າ ຫຼີກເວັ້ນຄວາມສ່ຽງໃນການລະເມີດກົດລະບຽບ.

ດັ່ງນັ້ນ, ຈຶ່ງລາຍງານມັງຍັງທ່ານເພື່ອຊາບ.

ຮຽນດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ຜູ້ອຳນວຍການໃຫຍ່ ບໍລິສັດ



ເນັຍເຫຼ່ຍ